# ຟ້າຫລາກສີ

(The Multi-colored Sky)

By: Ketkeo Pokphan

ຜືນແຜ່ນຟ້າ
ມີໝູ່ ດາວເຮືອງຮອງ
ບາງວັນ ເດືອນເພັງແຈ້ງ
ບາງເທື່ອເສົ້າ

ຄືນຄ່ຳຣາຕີ
ເປັ່ງປະກາຍຫຼາຍລ້ານ
ບາງຄືນມືອໝິ່ນ
ໝູນເລື້ອຍລ່ຳແຍງ

ຜືນແຜ່ນຟ້າ
ຄາມຂາວຂຽວ
ຕາເວັນຄ້ອຍ
ສີແສດສີ້ວ

ມີຫຼາກຫຼາຍສີ
ດ່າງດຳແດງຊ້ຳ
ແສງທອງເຫຼືອງ ອະລ່າມ
ເງົາເຫຼື້ອມດັ່ງມະນີ

ຍາມເຊົ້າ ແສງສ່ອງແຈ້ງ
ອີກຝາກນືອ
ຝົນລິນຍ້ອຍ
ຕັດກັບ ສີຮຸ່ງຮຸ້ງ

ຕາເວັນເຮື່ອເຮືອງໃສ
ມີດກົງກັນຂ້າມ
ຍອຍລົງຜືນແຜ່ນ
ກິນນ້ຳກົ່ງກິນ

ບາງເທື່ອ ຄືໂກດກົ້ວ
ສຽງກ້ອງ ດັ່ງກັງວານ
ຄືນກົວຢ້ານ
ເມກກ່ຳຊ້ຳ

ສຽງຜ່າຜະຫລຽງສາຍ
ຫວັ່ນແດນດິນດ້າວ
ຍິນສຽງນາບຊູ່
ລົມຕ້ອງຕື່ມຕາມ

ບາງວັນ ງາມເລີດລ້ຳ
ແສງສີອອນ
ຄືດັ່ງ ໃຈຄົນນີ້
ແປປ່ຽນປັ້ນ

ແລລ່ຳອອນຊອນ
ຜ່ອງໃສຂາວແຈ້ງ
ມີດີແກມຊົ່ວ
ເລົ່ງເລື້ອຍສູ່ຍາມ ແທ້ນໍ

# ຄອບຄົວ

(Family)

By: Lamone (Liza) Inthirath

ຄົນເຮົາໃນໂລກນີ້
ລອງຂຽນເປັນລາຍການ
ນັບຕົ້ນທັງພີ່ນ້ອງ
ໝູ່ຊະນິດແນບແໜນ

ມີໝູ່ຫລວງຫລາຍ
ຊື່ຍາວເຕັມປື້ມ
ນອກໃນລົ້ງແກ່ນ
ເປັນລ້ານກວ່າກະມີ

ຄັນທະວີໝູ່ເພີ້ມ
ມີໝູ່ທຸກສາຂາ
ຢ່າມືວວີນມອງຂ້າມ
ຜູ້ທີ່ພາຢູ່ຢັ້ງ

ເສີມຕໍ່ການດີ
ຍິ່ງດີຫລາຍລົ້ນ
ຄົນຄອງຄຽງຄູ່
ເສົາຄ້ຳແມ່ນຄອບຄົວ ທ່ານເອີ່ຍ

ອີກຄວາມໝາຍໜຶ່ງນັ້ນ
ກຽວເກີດຕາມກັນມາ
ພໍ່ແມ່ເດີມສອງເຖົ້າ
ເພິ່ນເຄີຍຄອຍກ່ອມລ້ຽງ

ຄືຄອບຄົວດຽວ
ຮອມດຽວໃນທ້ອງ
ມີຄວນປະປ່ອຍ
ດຽວນີ້ອ່ອນແຮງ ແທ້ນ່າ

ຄວນເບິ່ງແຍງຖືກຕ້ອງ
ຄວາມສຳພັນພາຍໃນ
ລອງຂຽນລົງແຜ່ນເຈ້ຍ
ຫາກຂຽນນາມພີ່ນ້ອງ

ລຳດັບສຳຄັນ ກ່ອນບໍ່!
ຮັກຫອມກັນແໜ້ນ
ນາມເພື່ອນມີມາກ
ຮອມທ້ອງພັດບໍ່ຫຼາຍ ແທ້ໃດ່

ໝາຍນາມຄົນເກີດພ້ອມ
ບິດາມານດາຕົນ
ຍາມເສຍໃຈຈົນໄຮ້
ໝາຍໂອບອອຍຊຸກຍູ້

ມີແຕ່ສອງຄົນ ເທົ່ານັ້ນ
ຊອກໃຜແທນໄດ້
ມີເຄີຍແໜງໝາຍ
ຄຽງຂ້າງລູກສເໝີ ແທ້ແລ້ວ

## Lao Proverb 1

ຄຸນຂອງພໍ່ແມ່ນີ້ ໜັກເກົ່ງທໍລະນີ ທ່ານເອີຍ
ຄອນທີ່ຄະນິງນຶບ ແນບປະນົມມີນ້ອມ
ຫອມຮັກແພງພຽນລືຽງ ຖະໜອມແລຫຼິງລ່ຳ
ຄຳເພິ່ນສອນສັ່ງໃຫ້ ຈຳໄວ້ຢ່າຊິລືມ

ໃຜຫາກຄິດເຄັ່ງຮ້າຍ ລືມຝ່າຍບິດາ
ທັງແມ່ມານດາປະ ປ່ອຍເສຍໂສຖິ້ມ
ຕັດຂາດກຸດສຸດແລ້ວ ລາໄລໄກຫ່າງ
ທາງຊີວິດທ່ານຊິຮ້າງ ເວນຊິຈຳຈ່ອງຂ້າງ
ຄາງຮ້ອງຮັບແຕ່ກຳ ແລ້ວນໍ

## Lao Proverb 2

From: Lao Positive Thinking
Facebook.com/thankplus
By: Lay Tiberius Kirk

(Untitled)

ຕາບໃດທີ່ເຮົາຍັງມີ “ລົມຫາຍໃຈ”
ເຮົາກໍຍັງມີ ຄວາມຫວັງ
“ທີ່ຈະກ້າວຕໍ່ໄປ”